ຈັນຍາບັນ ຂອງ ນັກສື່ມວນລາວປະກອບດ້ວຍ:

1). ຈຸດສູງຂອງສື່ມວນຊົນລາວແມ່ນຮັບໃຊ້ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດລາວ ໃຫ້ມີສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ບໍ່ວ່າຈະຢູ່ຂົງເຂດໃດ ແລະ ສະພາບແວດລ້ອມໃດ, ນັກຂ່າວຕ້ອງເຄື່ອນໄຫວເພື່ອຈຸດມຸ່ງໝາຍສູງສຸດດັ່ງກ່າວນັ້ນ.

2). ສື່ມວນຊົນປະຕິບັດສິດໃນການຖະແຫຼງຂ່າວຂອງພົນລະເມືອງ, ນັກຂ່າວຕ້ອງພາວະວິໄສ (ບໍ່ໃນຕົວ), ຊື່ຕົງ (ຈົ່ງຮັກພັກດີ) ແລະ ເຄົາລົບຄວາມເປັນຈິງ, ທຸກໆຖະແຫຼງຂ່າວທີ່ອອກສູ່ສາທາລະນະຊົນຕ້ອງສ່ອງແສງຖືກຕ້ອງກັບທາດແທ້ ຂອງຄວາມເປັນຈິງພາວະວິໄສໃນສະພາບສັງຄົມຕົວຈິງ, ບໍ່ໃສ່ຮ້າຍ ຫຼື ປັ້ນແຕ່ງເຫດການຂຶ້ນເອງຢ່າງເດັດຂາດ, ນັກຂ່າວມີຄວາມຮັບຜິດຊອບສະໜອງຂໍ້ມູນຂ່າວສານໃຫ້ແກ່ປະຊາຊົນຕາມຄວາມຈິງ, ຖືກຕ້ອງກັບທາດແທ້ຂອງຂະບວນວິວັດຂອງເຫດການທີ່ເກີດຂຶ້ນ ເຮັດແນວນີ້ກໍເພື່ອນຳພາທາງສຽງຂອງສັງຄົມ.

3). ສື່ມວນຊົນແມ່ນພາຫານະໃນການຖະແຫຼງຂ່າວທີ່ຈຳເປັນໃນຊີວິດສັງຄົມໂດຍສະເພາະແມ່ນຊີວິດວັດທະນະທຳ, ນັກຂ່າວເຄົາລົບ ແລະ ປະຕິບັດສິດເສລີພາບດ້ານສື່ມວນຊົນ, ຮັບຜິດຊອບຕໍ່ສັງຄົມ, ຕໍ່ລັດປະຊາທິປະໄຕປະຊາຊົນ, ຕໍ່ປະຊາຊົນບັນດາເຜົ່າ ແລະ ຕໍ່ເສລີພາບໃນການເຄື່ອນໄຫວອາຊີບໃນຂອບເຂດຂອງລັດຖະທຳມະນູນ ແລະ ກົດໝາຍ; ນັກຂ່າວຕ້ອງປະຕິບັດຢ່າງຖືກຕ້ອງຕາມກົດລະບຽບຂອງອົງການສື່ມວນຊົນ, ບໍ່ແມ່ນວ່າຖືກບີບບັງຄັບແລ້ວປະພຶດຕົນທີ່ຝືນຕໍ່ຈຸດໝາຍອັນສູງສົ່ງຂອງສື່ມວນຊົນລາວ ແລະ ດຳເນີນການທີ່ຝືນກັບຜົນປະໂຫຍດຂອງຊາດ.

4). ຄຽງຄູ່ກັບການປະຕິບັດສິດເສລີພາບໃນການຖະແຫຼງຂ່າວ, ການປະຕິບັດສິດຕອບຄຳຖາມ ແລະ ສິດປະຕິເສດເຊິ່ງເປັນຫຼັກການແຫ່ງເສລີພາບຂອງສື່ມວນຊົນ, ນັກຂ່າວມີສິດຍຶດໝັ້ນໃນທັດສະນະການຖະແຫຼງຂ່າວທີ່ຖືກຕ້ອງຂອງຕົນ, ແຕ່ຕ້ອງເຄົາລົບສິດຕອບຄຳຖາມ ແລະ ສິດປະຕິເສດຂອງມວນຊົນທີ່ຖືກຕ້ອງຕາມກົດໝາຍ.

5). ນັກຂ່າວມີໜ້າທີ່ປົກປ້ອງແຫຼ່ງຂ່າວ ແລະ ຮັກສາຄວາມລັບແກ່ບຸກຄົນທີ່ສະໜອງຂ່າວຢ່າງຖືກຕ້ອງຕາມກົດໝາຍ.

6). ສື່ມວນຊົນລາວເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ພ້ອມດຽວກັນນັ້ນກໍເຄົາລົບວັດທະນະທຳ ແລະ ຄຸນນະທຳທາງດ້ານຈິດໃຈຂອງມວນມະນຸດ, ເຕົ້າໂຮມສາມັກຄີປວງຊົນລາວບັນດາເຜົ່າ ເພື່ອສັນຕິພາບ, ມິດຕະພາບ, ຄວາມເຂົ້າໃຈລະຫວ່າງປະເທດຊາດ ແລະ ປະເທດຕ່າງໆໃນໂລກ.

7). ນັກຂ່າວປະກອບສ່ວນເສີມຂະຫຍາຍສິດຜົນປະໂຫຍດຂອງວົງຄະນາຍາດ, ເຄົາລົບສິດທິມະນຸດ, ບໍ່ສວຍໃຊ້ການຖະແຫຼງຂ່າວ ເພື່ອກົດຂີ່ຄຸນທາດຂອງຄົນ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງຄົນອື່ນ.

8). ນັກຂ່າວຍາມໃດກໍ່ມີຄຸນທາດປອດໃສ, ບໍ່ສວຍໂອກາດ, ບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວຈຶ່ງຖະແຫຼງຂ່າວ ຫຼື ບໍ່ຖະແຫຼງຂ່າວຢ່າງເດັດຂາດ. ນັກຂ່າວບໍ່ສວຍໃຊ້ວິຊາຊີບເພື່ອຫາຜົນປະໂຫຍດ.

9). ນັກຂ່າວເຄົາລົບຄວາມເຫັນ ແລະ ທັດສະນະທາງສຽງຂອງສັງຄົມ, ວິຊາຊີບຂອງເພື່ອນຮ່ວມງານ; ສາມັກຄີ, ຮ່ວມມື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດ; ຕໍ່ສູ້ຕ້ານທຸກການກະທຳທີ່ກໍ່ຄວາມເສຍຫາຍຕໍ່ປະເທດຊາດ ແລະ ຕໍ່ຜົນປະໂຫຍດຂອງປະຊາຊົນ
ແລະ ຂັດກັບຈັນຍາບັນຂອງນັກຂ່າວ.

10). ນັກຂ່າວດຳລົງຊີວິດທີ່ສົດໃສ, ສີວິໄລ, ໄຝ່ຮໍ່າຮຽນ, ຖະໜອມຖ່ອມຕົວ ເພື່ອຄວາມກ້າວໜ້າ.
ການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມຊຳນິຊຳນານໃນວິຊາຊີບຂອງຕົນແມ່ນຄວາມມຸ່ງ
ຫວັງ ແລະ ການສູ້ຊົນຕະຫຼອດຊີວິດຂອງນັກຂ່າວລາວ.